ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0386-/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 27 JAN 2026

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 01/2026

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດ ອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 01/2026, ວັນທີ 26 ມັງກອນ 2026 ມີລາຍລະອຽດລຸ່ມນີ້:

1. ກຳນົດວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2026 ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ດັ່ງນີ້:

❖ **ກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ຄັ້ງທີ 01/2026**

1) **ສະຖານທີ່**: ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.
2) **ວັນປິດປຶ້ມບັນຊີຜູ້ຖືຮຸ້ນ** ເພື່ອກຳນົດສິດຂອງຜູ້ຖືຮຸ້ນເຂົ້າຮ່ວມ: ວັນທີ 10 ກຸມພາ 2026.
3) **ວັນ-ເວລາປະຊຸມ**: ວັນສຸກ, ວັນທີ 20 ມີນາ 2026, ເວລາ 13:30 - 15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00 - 17:00 ໂມງ ດຳເນີນກອງປະຊຸມ.

❖ **ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025**

1) **ສະຖານທີ່**: ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.
2) **ວັນປິດປຶ້ມບັນຊີຜູ້ຖືຮຸ້ນ** ເພື່ອກຳນົດສິດຂອງຜູ້ຖືຮຸ້ນເຂົ້າຮ່ວມ: ວັນທີ 13 ມີນາ 2026.
3) **ວັນ-ເວລາປະຊຸມ**: ວັນພຸດ, ວັນທີ 29 ເມສາ 2026, ເວລາ 13:30 - 15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00 - 17:00 ໂມງ ດຳເນີນກອງປະຊຸມ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອ ກຳນົດສິດ ຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ ແລະ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນ ການແກ້ໄຂ ວັນ-ເວລາ ແລະ ສະຖານທີ່ປະຊຸມຜູ້ຖືຮຸ້ນດັ່ງກ່າວ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມວ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la

2. ສໍາລັບວາລະກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ຄັ້ງທີ 01/2026 ແລະ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2025 ແມ່ນຈະແຈ້ງໃຫ້ທ່ານຊາບໃນໜັງສືແຈ້ງເຊີນ ແລະ;

1) ມອບອໍານາດໃຫ້ຜູ້ອໍານວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອໍານາດໃນການກໍານົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈໍາເປັນກ່ຽວກັບການກະກຽມເປີດກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ຄັ້ງທີ 01/2026 ແລະ ກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2025 ໄດ້ທຸກປະການ, ລວມທັງໃຫ້ມີອໍານາດໃນການດໍາເນີນການໃດໜຶ່ງອັນຈໍາເປັນ ລວມທັງການກະກຽມເອກະສານຕ່າງໆ ແລະ ດໍາເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ; ແລະ

2) ກໍານົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄຶ: ແຕ່ງຕັ້ງ ທ່ານ ສຈ. ປອ. ພູເພັດ ກ້ຽວພິລາວົງ ແລະ ທ່ານ ພັນປານີ ສິດທິລາດ ທີ່ເປັນກໍາມະການອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈູມຄໍາ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມວ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la